ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ ............./ອຄ.ກອຫ

ນະຄອນຫລວງວຽງຈັນ, ວັນທີ .......................

# (ຮ່າງ)

# ຂໍ້ຕົກລົງວ່າດ້ວຍ ການຄຸ້ມຄອງຊິ້ນສ່ວນຍານພາຫະນະ ສຳລັບຜະລິດ ແລະ ປະກອບຢູ່ໂຮງງານໃນ ສປປ ລາວ

- ອີງຕາມກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ (ສະບັບປັບປຸງ) ສະບັບເລກທີ 48/ສພຊ, ລົງວັນທີ 27/12/2013.
- ອີງຕາມດຳລັດວ່າດ້ວຍ ທຸລະກິດຍານພາຫະນະ ເລກທີ................., ລົງວັນທີ...........................
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ ……………..
- ອີງຕາມແຈ້ງການວ່າດ້ວຍມາດຕະຖານ ແລະ ເງື່ອນໄຂຂອງໂຮງງານປະກອບລົດເລກທີ 136/ອຫ, ລົງວັນທີ 02/04/2002.

## ລັດຖະມົນຕີກະຊວງ ອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຄຸ້ມຄອງ, ກວດກາ ແລະ ຕິດຕາມການນຳເຂົ້າຊິ້ນສ່ວນຍານພາຫະນະ ເພື່ອມາຜະລິດ ແລະ ປະກອບຢູ່ໂຮງງານ ເພື່ອເຮັດໃຫ້ການເຄື່ອນໄຫວຂອງໂຮງງານຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການ ແນ່ໃສ່ເພື່ອຮັບປະກັນທາງດ້ານເຕັກນິກຄວາມປອດໄພ, ຄຸນນະພາບ ແລະ ໄດ້ມາດຕະຖານຕາມລະບົບເຕັກນິກການປະກອບ ແລະ ຜະລິດຍານພາຫະນະ; ຊຸກຍູ້, ສົ່ງເສີມ ແລະ ດຶງດູດການລົງທຶນພາຍໃນ ແລະ ຕ່າງປະເທດເຂົ້າໃສ່ອຸດສາຫະກຳປະກອບ-ຜະລິດຊິ້ນສ່ວນຍານພາຫະນະຕ່າງໆ ໃນການສ້າງເປັນໜໍ່ແໜງອຸດສາຫະກຳປະກອບ ແລະ ຜະລິດຍານພາຫະນະ; ແລະ ເຊື່ອມໂຍງການຜະລິດກັບພາກພື້ນ ແລະ ສາກົນ.

### ມາດຕາ 2 ການຄຸ້ມຄອງຊິ້ນສ່ວນຍານພາຫະນະ ເພື່ອມາຜະລິດ ແລະ ປະກອບຢູ່ໂຮງງານ

ການປະກອບຍານພາຫະນະ ໝາຍເຖິງການນຳເອົາຊິ້ນສ່ວນ-ອາໄຫຼ່ຕ່າງໆ ມາປະກອບເຂົ້າກັນພາຍໃນໂຮງງານ ໂດຍຜ່ານເຕັກນິກ ແລະ ກຳມະວິທີຂອງການປະກອບເຊັ່ນ: ການເຊື່ອມຕໍ່, ການຈັບນັອດ ແລະ ອື່ນໆ; ຊຶ່ງສາມາດປະກອບເຂົ້າກັນໄດ້ທັນທີ ແລະ ສາມາດນຳໃຊ້ໄດ້ເລີຍ.

### ມາດຕາ 3 ການອະທິບາຍຄຳສັບ

3.1. ຍານພາຫະນະ ໝາຍເຖິງຜະລິດຕະພັນສຳເລັດຮູບເຊັ່ນ: ລົດຈັກ 2 ລໍ້ ແລະ ລົດ 4 ລໍ້ຂຶ້ນໄປທີ່ແລ່ນດ້ວຍເຄື່ອງຈັກ ໂດຍນຳໃຊ້ພະລັງງານເຊື້ອໄຟ; ພະລັງງານໄຟຟ້າ; ພະລັງງານ ອາຍແກັສ ແລະ ພະລັງງານ ອື່ນໆ.

3.2. ຜະລິດຕະພັນຍານພາຫະນະ (Automotive Products) ໝາຍເຖິງ ຊິ້ນສ່ວນຕ່າງໆ ຂອງຍານພາຫະນະ.

3.3. ຊິ້ນສ່ວນຫມາຍເຖິງຜະລິດຕະພັນ ຫຼື ວັດຖຸເຄິ່ງສຳເລັດຮູບ ທີ່ມີເປົ້າຫມາຍເພື່ອນຳໃຊ້ປະກອບ-ຜະລິດໃຫ້ກາຍເປັນຜະລິດຕະພັນ ເຄິ່ງສຳເລັດຮູບ ຫຼື ສຳເລັດຮູບ.

3.5. SKD ຂຽນຫຍໍ້ຈາກພາສາ ສາກົນ "Semi Knocked Down" ຫມາຍເຖິງຊິ້ນສ່ວນຢູ່ໃນຮູບຮ່າງລັກສະນະທີ່ແກ່ະ ແລະ ແຍກອອກຈາກກັນບໍ່ລະອຽດໂດຍປະມານ 50%, ຊຶ່ງ ເປັນຊິ້ນສ່ວນພໍໃຜພໍມັນຈາກຕ່າງປະເທດທີ່ນຳເຂົ້າເພື່ອປະກອບ ຢູ່ໂຮງງານໃນ ສປປ ລາວ.

3.6. CKD ຂຽນຫຍໍ້ຈາກພາສາ ສາກົນ "Completely Knocked Down " ຫມາຍເຖິງຊິ້ນສ່ວນ ຢູ່ໃນຮູບຮ່າງລັກສະນະທີ່ແກ່ະ ແລະ ແຍກອອກຈາກກັນລະອຽດ, ຊຶ່ງເປັນຊິ້ນສ່ວນພໍໃຜພໍມັນ (ຍົກເວັ້ນແຕ່ພາກສ່ວນຈັກ ຫລື ແບດເຕີລີ (ສຳລັບຍານພາຫະນະໄຟຟ້າ)) ຈາກຕ່າງປະເທດທີ່ນຳເຂົ້າເພື່ອປະກອບ ຢູ່ໂຮງງານໃນ ສປປ ລາວ.

3.7. IKD ຂຽນຫຍໍ້ຈາກພາສາ ສາກົນ "Incompletely Knocked Down " ຫມາຍເຖິງຊິ້ນສ່ວນ ຢູ່ໃນຮູບຮ່າງລັກສະນະທີ່ແກ່ະ ແລະ ແຍກອອກຈາກກັນແບບ CKD ຈາກຕ່າງປະເທດທີ່ນຳເຂົ້າເພື່ອປະກອບຢູ່ໂຮງງານ ແຕ່ບໍ່ຄົບຊຸດ ຊຶ່ງຊິ້ນມີສ່ວນ-ອາໄຫຼ່ຈຳນວນໜຶ່ງແມ່ນໄດ້ຮັບການຜະລິດ ແລະ ຕົບແຕ່ງຢູ່ພາຍໃນປະເທດ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບຄຸ້ມຄອງ, ສົ່ງເສີມ ແລະ ພັດທະນາຍານພາຫະນະ ແລະ ຜະລິດຕະພັນຍານພາຫະນະທີ່ໄດ້ຜະລິດ-ປະກອບຢູ່ໂຮງງານ ທີ່ຕັ້ງຢູ່ ສປປລາວ, ຊຶ່ງເປັນຍານພາຫະນະໃໝ່ 100%.

**ພາກທີ II**

**ຮູບແບບ, ມາດຕະຖານ ແລະ ຄຸນນະພາບ ຂອງຊິ້ນສ່ວນຍານພາຫະນະ**

**ໝວດທີ 1**

**ຊິ້ນສ່ວນ ສຳລັບຍານພາຫະນະ 2 ລໍ້**

**ມາດຕາ 5 ຮູບແບບຊິ້ນສ່ວນສຳລັບຍານພາຫະນະ 2 ລໍ້**

ຮູບແບບຊິ້ນສ່ວນ ສຳລັບຍານພາຫະນະ 2 ລໍ້ ປະກອບມີ: ລົດຈັກ ແລະ ລົດໄຟຟ້າ ເພື່ອນຳເຂົ້າມາຜະລິດ ແລະ/ຫຼື ປະກອບເປັນຄັນຢູ່ໂຮງງານ ປະກອບດ້ວຍ 3 ຮູບແບບ ຄື: ເອັສເຄດີ (SKD); ຊີເຄດີ (CKD) ແລະ ໄອເຄດີ (IKD).

ການນຳເຂົ້າຊິ້ນສ່ວນໃນຮູບແບບ SKD: ແມ່ນການນຳເຂົ້າຊິ້ນສ່ວນທີ່ໄດ້ມີການປະກອບແລ້ວ ໂດຍຖືກແກະ ແລະ ແຍກອອກຈາກກັນເປັນຊິ້ນສ່ວນພໍໃຜລາວ ຈຳນວນເຄິ່ງໜຶ່ງ ຈາກຕ່າງປະເທດທີ່ນຳເຂົ້າເພື່ອປະກອບເປັນຄັນຢູ່ໂຮງງານ. ຊຶ່ງຂະບວນການປະກອບ ບໍ່ຫຼາຍຂັ້ນຕອນ, ມີສາຍພານສຳລັບປະກອບໄລຍະສັ້ນ, ມີເຄື່ອງຈັກອຸປະກອນ ສຳລັບການປະກອບ ແລະ ນຳໃຊ້ຄົນງານຈຳນວນໜຶ່ງ. ສຳລັບຈຳນວນລາຍການຊິ້ນສ່ວນທີ່ນຳເຂົ້າມາໃນຮູບແບບ SKD ສາລັບຍານພາຫະນະ 2 ລໍ້ (ລົດຈັກ ແລະ ລົດໄຟຟ້າ) ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍ 1.

ການນຳເຂົ້າຊິ້ນສ່ວນໃນຮູບແບບ CKD: ແມ່ນການນນຳເຂົ້າຊິ້ນສ່ວນຢູ່ໃນຮູບຮ່າງລັກ ສະນະທີ່ແກ່ະ ແລະ ແຍກອອກຈາກກັນລະອຽດ, ຊຶ່ງເປັນຊິ້ນສ່ວນພໍໃຜ ພໍມັນ (ຍົກເວັ້ນແຕ່ພາກສ່ວນຈັກ ຫລື ແບດເຕີລີ(ສຳລັບລົດໄຟຟ້າ))) ຈາກຕ່າງປະເທດທີ່ນຳເຂົ້າເພື່ອປະກອບເປັນຄັນ ຢູ່ໂຮງງານ. ຊຶ່ງມີຂະບວນການປະກອບທີ່ເປັນຕ່ອງໂສ້, ມີສາຍພານສຳລັບປະກອບຍາວ, ມີເຄື່ອງຈັກອຸປະກອນ ສຳລັບການປະກອບ ແລະ ນຳໃຊ້ຄົນງານຈຳນວນຫຼາຍ. ສຳລັບຈຳນວນລາຍການຊິ້ນສ່ວນທີ່ນຳເຂົ້າມາໃນຮູບແບບ CKD ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍ 2.

ການນຳເຂົ້າຊິ້ນສ່ວນໃນຮູບແບບ IKD : ແມ່ນການນຳເຂົ້າຊິ້ນສ່ວນທີ່ຍັງບໍ່ທັນຄົບຊຸດຢູ່ໃນຮູບຮ່າງລັກສະນະທີ່ແກ່ະ ແລະ ແຍກອອກຈາກກັນລະອຽດຄືກັນກັບການນຳເຂົ້າໃນຮູບແບບ CKD ຊຶ່ງເປັນຊິ້ນສ່ວນພໍໃຜພໍມັນ (ຍົກເວັ້ນແຕ່ພາກສ່ວນຈັກ ຫລື ແບດເຕີລີ(ສຳລັບລົດໄຟຟ້າ)) ຈາກຕ່າງປະເທດ, ແຕ່ໃນນີ້ ຕ້ອງມີຊິ້ນສ່ວນຈຳນວນໜຶ່ງແມ່ນໄດ້ຮັບການຜະລິດ ແລະ ຕົບແຕ່ງຢູ່ພາຍໃນໂຮງງານ ຫລື ພາຍໃນປະເທດ ຕາມເງື່ອນໄຂ ດັ່ງນີ້:

1) <u>ເງື່ອນໄຂ ທີ 1</u>: ບັນດາຊິ້ນສ່ວນ ທີ່ສາມາດຜະລິດພາຍໃນໂຮງງານໄດ້ເອງ ຕ້ອງມີມູນຄ່າເທົ່າກັບ ຫລື ຫລາຍກວ່າ 15 % ຂອງມູນຄ່າລົດຄັນໜຶ່ງ;

2) <u>ເງື່ອນໄຂ ທີ 2</u>: ບັນດາຊິ້ນສ່ວນ ທີ່ສາມາດຜະລິດພາຍໃນໂຮງງານໄດ້ເອງ ຕ້ອງມີມູນຄ່າ ເທົ່າກັບ ຫລື ຫລາຍກວ່າ 10 % ແລະ ຊື້ຊິ້ນສ່ວນຈຳນວນໜຶ່ງຈາກໂຮງງານອື່ນທີ່ຜະລິດພາຍໃນປະເທດ ທີ່ມີມູນຄ່າຫລາຍກວ່າ 10 % ລວມຫລາຍກວ່າ 20% ຂອງມູນຄ່າລົດຄັນໜຶ່ງ; ແລະ

3) <u>ເງື່ອນໄຂ ທີ 3</u>: ບັນດາຊິ້ນສ່ວນ ທີ່ຊື້ຈາກໂຮງງານອື່ນທີ່ຜະລິດພາຍໃນປະເທດ ເພື່ອນຳມາປະກອບກັບຊິ້ນສ່ວນທີ່ນຳເຂົ້າຈາກຕ່າງປະເທດ ເພື່ອປະກອບເປັນຄັນໃນໂຮງງານ ຕ້ອງມີມູນຄ່າເທົ່າກັບ ຫລື ຫລາຍກວ່າ 30 % ຂອງມູນຄ່າລົດຄັນໜຶ່ງ.

ພາຍໃນໂຮງງານ ແມ່ນມີຂະບວນການປະກອບເປັນຕ່ອງໂສ້, ມີສາຍພານສຳລັບປະກອບຍາວ, ມີເຄື່ອງຈັກອຸປະກອນ ສຳລັບການປະກອບ ແລະ ນຳໃຊ້ຄົນງານຈຳນວນຫຼາຍ ຄືກັນກັບການປະກອບພາຫະນະໃນຮູບແບບ CKD ແລະ ມີຂະບວນການຜະລິດຊິ້ນສ່ວນໃດໜຶ່ງແຍກອອກເປັນອັນສະເພາະ ຢູ່ພາຍໃນໂຮງງານ.

**ມາດຕາ 6 ລາຍການຊິ້ນສ່ວນ ຂອງຍານພາຫະນະ 2 ລໍ້**

ແຕ່ລະຮູບແບບ ຂອງລະບົບຊິ້ນສ່ວນ ຕ້ອງກຳນົດຈຳນວນລາຍການຂອງຊິ້ນສ່ວນຍານພາຫະນະຢ່າງລະອຽດ ໂດຍສອດຄ່ອງຕາມແຕ່ລະລະບົບຊິ້ນສ່ວນ ຕາມການກຳນົດໃນມາດຕາ 5 ຂອງຂໍ້ຕົກລົງສະບັບນີ້, ຊຶ່ງລາຍການຊິ້ນສ່ວນແຍກອອກເປັນ ສອງປະເພດ ຄື: ລາຍການຊິ້ນສ່ວນຍ່ອຍ ທີ່ສາມາດຜະລິດຢູ່ພາຍໃນ ຫຼື ນຳເຂົ້າຈາກຕ່າງປະເທດ ເພື່ອມາຜະລິດ-ປະກອບ ເປັນຊິ້ນສ່ວນໃດໜຶ່ງ ເພື່ອສະໜອງ ຫຼື ປະກອບເຂົ້າໃນສາຍໃຍການປະກອບຍານພາຫະນະ ແລະ ຊິ້ນສ່ວນເປັນຊຸດເພື່ອປະກອບເຂົ້າໃນສາຍໃຍການປະກອບຍານພາຫະນະ. ບາງກໍລະນີ ຈະມີການດັດປັບຈຳນວນລາຍການຂອງຊິ້ນສ່ວນ ທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍ 1 ແລະ 2 ເພື່ອມາປະກອບໃນໂຮງງານ ໂດຍອີງຕາມແຕ່ລະປະເພດ ແລະ ເຕັກໂນໂລຊີຂອງຍານພາຫະນະ ຕາມແຕ່ລະໄລຍະ.

**ມາດຕາ 7 ລາຍການຊິ້ນສ່ວນ ທີ່ແຕກຕ່າງຈາກການກຳນົດສຳລັບຍານພາຫະນະ 2 ລໍ້**

ລາຍການຊິ້ນສ່ວນ ທີ່ຂໍນຳເຂົ້າ ຫຼື ຜະລິດຢູ່ໃນໂຮງງານ ທີ່ມີຮູບແບບ ແລະ ລາຍການທີ່ແຕກຕ່າງຈາກທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້, ໂຮງງານຕ້ອງສະເໜີຕໍ່ຂະແໜງອຸດສາຫະກຳ ແລະ ການຄ້າ ພິຈາລະນາຄືນຄ່ອາເພີ່ມເຕີມຕາມແຕ່ລະກໍລະນີ.

## ໝວດທີ 2

## ຊິ້ນສ່ວນ ສຳລັບຍານພາຫະນະ 4 ລໍ້ຂຶ້ນໄປ

**ມາດຕາ 8 ຮູບແບບຊິ້ນສ່ວນສຳລັບຍານພາຫະນະ 4 ລໍ້ຂຶ້ນໄປ**

ຮູບແບບຊິ້ນສ່ວນ ສາລັບຍານພາຫະນະ 4 ລໍ້ຂຶ້ນໄປ ປະກອບມີ: ລົດເກງ, ລົດຈິບ, ລົກກະບະ ແລະ ລົດບັນທຸກ ເພື່ອນຳເຂົ້າມາຜະລິດ ແລະ/ຫຼື ປະກອບເປັນຄັນຢູ່ໂຮງງານ ປະກອບດ້ວຍ 3 ຮູບແບບ ຄື: ເອັສເຄດີ (SKD); ຊີເຄດີ (CKD) ແລະ ໄອເຄດີ (IKD).

ການນຳເຂົ້າຊິ້ນສ່ວນໃນຮູບແບບ SKD: ແມ່ນການນຳເຂົ້າຊິ້ນສ່ວນລົດເບົາ ແລະ ລົດບັນທຸກ ທີ່ໄດ້ມີການປະກອບແລ້ວ ໂດຍຖືກແກະ ແລະ ແຍກອອກຈາກກັນເປັນຊິ້ນສ່ວນພໍໃຜລາວຈຳນວນເຄິ່ງໜຶ່ງ ຈາກຕ່າງປະເທດ ແລະ ນຳເຂົ້າມາເປັນລັກສະນະຊິ້ນສ່ວນ ເພື່ອປະກອບເປັນຄັນຢູ່ໂຮງງານ. ພາຍໃນໂຮງງານ ຕ້ອງມີຂະບວນການປະກອບ ແຕ່ບໍ່ຫຼາຍຂັ້ນຕອນ, ມີສາຍພານສຳລັບປະກອບໄລຍະສັ້ນ, ມີເຄື່ອງຈັກອຸປະກອນເຄື່ອງມື ສຳລັບການປະກອບ ແລະ ນຳໃຊ້ຄົນງານຈຳນວນໜຶ່ງ.

ສໍາລັບຈໍານວນລາຍການຊິ້ນສ່ວນທີ່ນໍາເຂົ້າມາໃນຮູບແບບ SKD ສາລັບຍານພາຫະນະ 4 ລໍ້ຂື້ນໄປ ໄດ້ກາໜົດໄວ້ໃນເອກະສານຊ້ອນທ້າຍ 3.

ການນໍາເຂົ້າຊິ້ນສ່ວນໃນຮູບແບບ CKD: ແມ່ນການນນໍາເຂົ້າຊິ້ນສ່ວນຢູ່ໃນຮູບຮ່າງລັກສະນະທີ່ແກ່ະ ແລະ ແຍກອອກຈາກກັນລະອຽດ ຊຶ່ງເປັນຊິ້ນສ່ວນພໍໃຜລາວ (ຍົກເວັ້ນແຕ່ພາກສ່ວນຈັກ) ແລະ ຮ່າງ ຫລື ຊັດຊີຂອງລົດ (ສໍາລັບລົດບັນທຸກ)ແມ່ນຍັງບໍ່ທັນໄດ້ຮັບການພົ່ນສີເທື່ອ. ພາຍໃນໂຮງງານ ຕ້ອງມີຂະບວນການປະກອບທີ່ເປັນຕ່ອງໂສ້, ມີສາຍພານສໍາລັບປະກອບຍາວ, ມີເຄື່ອງຈັກອຸປະກອນ ສໍາລັບການປະກອບ, ມີຂະບວນການເຮັດສີຄົບຊຸດ ແລະ ນໍາໃຊ້ຄົນງານຈໍານວນຫຼາຍ. ສໍາລັບຈໍານວນລາຍການຊິ້ນສ່ວນທີ່ນໍາເຂົ້າມາໃນຮູບແບບ CKD ໄດ້ກາໜົດໄວ້ໃນເອກະສານຊ້ອນທ້າຍ 4.

ການນໍາເຂົ້າຊິ້ນສ່ວນໃນຮູບແບບ IKD : ແມ່ນການນໍາເຂົ້າຊິ້ນສ່ວນທີ່ຍັງບໍ່ທັນຄົບຊຸດຢູ່ໃນຮູບຮ່າງລັກສະນະທີ່ແກ່ະ ແລະ ແຍກອອກຈາກກັນລະອຽດຄືກັນກັບການນໍາເຂົ້າໃນຮູບແບບ CKD ຊຶ່ງເປັນຊິ້ນສ່ວນພໍໃຜພໍມັນ (ຍົກເວັ້ນແຕ່ພາກສ່ວນຈັກ ແລະ ຮ່າງ ຫລື ຊັດຊີຂອງລົດ ຈາກຕ່າງປະເທດ, ແຕ່ໃນນີ້ ຕ້ອງມີຊິ້ນສ່ວນຈໍານວນໜຶ່ງແມ່ນໄດ້ຮັບການຜະລິດ ແລະ ຕົບແຕ່ງຢູ່ພາຍໃນໂຮງງານ ຫລື ພາຍໃນປະເທດ ຕາມເງື່ອນໄຂ ດັ່ງນີ້:

1) ເງື່ອນໄຂ ທີ 1: ບັນດາຊິ້ນສ່ວນ ທີ່ສາມາດຜະລິດພາຍໃນໂຮງງານໄດ້ເອງ ຕ້ອງມີມູນຄ່າເທົ່າກັບ ຫລື ຫລາຍກວ່າ 10 % ຂອງມູນຄ່າລົດຄັນໜຶ່ງ;
2) ເງື່ອນໄຂ ທີ 2: ບັນດາຊິ້ນສ່ວນ ທີ່ສາມາດຜະລິດພາຍໃນໂຮງງານໄດ້ເອງ ຕ້ອງມີມູນຄ່າເທົ່າກັບ ຫລື ຫລາຍກວ່າ 7 % ແລະ ຊື້ຊິ້ນສ່ວນຈານວນໜຶ່ງຈາກໂຮງງານອື່ນທີ່ຜະລິດພາຍໃນປະເທດ ທີ່ມີມູນຄ່າເທົ່າກັບຫລາຍກວ່າ 8 % ລວມຫລາຍກວ່າ 15% ຂອງມູນຄ່າລົດຄັນໜຶ່ງ; ແລະ
3) ເງື່ອນໄຂ ທີ 3: ບັນດາຊິ້ນສ່ວນ ທີ່ຊື້ຈາກໂຮງງານອື່ນທີ່ຜະລິດພາຍໃນປະເທດ ເພື່ອນໍາມາປະກອບກັບຊິ້ນສ່ວນທີ່ນໍາເຂົ້າຈາກຕ່າງປະເທດ ເພື່ອປະກອບເປັນຄັນໃນໂຮງງານ ຕ້ອງມີມູນຄ່າເທົ່າກັບ ຫລື ຫລາຍກວ່າ 20 % ຂອງມູນຄ່າລົດຄັນໜຶ່ງ.

ພາຍໃນໂຮງງານ ແມ່ນມີຂະບວນການປະກອບເປັນຕ່ອງໂສ້, ມີສາຍພານສໍາລັບປະກອບຍາວ, ມີເຄື່ອງຈັກອຸປະກອນ ສໍາລັບການປະກອບ, ມີຂະບວນການເຮັດສີຄົບຊຸດ ແລະ ນໍາໃຊ້ຄົນງານຈໍານວນຫຼາຍ ຄືກັນກັບການປະກອບພາຫະນະໃນຮູບແບບ CKD ແລະ ມີຂະບວນການຜະລິດຊິ້ນສ່ວນໃດໜຶ່ງແຍກອອກເປັນອັນສະເພາະ ຢູ່ພາຍໃນໂຮງງານ.

### ມາດຕາ 9 ລາຍການຊິ້ນສ່ວນ ຂອງຍານພາຫະນະ 2 ລໍ້

ແຕ່ລະຮູບແບບ ຂອງລະບົບຊິ້ນສ່ວນ ຕ້ອງກໍານົດຈໍານວນລາຍການຂອງຊິ້ນສ່ວນຍານພາຫະນະຢ່າງລະອຽດ ໂດຍສອດຄ່ອງຕາມແຕ່ລະລະບົບຊິ້ນສ່ວນ ຕາມການກໍານົດໃນມາດຕາ 8 ຂອງຂໍ້ຕົກລົງສະບັບນີ້, ຊຶ່ງລາຍການຊິ້ນສ່ວນ ແຍກອອກເປັນ ສອງປະເພດ ຄື: ລາຍການຊິ້ນສ່ວນຍ່ອຍ ທີ່ສາມາດຜະລິດຢູ່ພາຍໃນ ຫຼື ນໍາເຂົ້າຈາກຕ່າງປະເທດ ເພື່ອມາຜະລິດ-ປະກອບ ເປັນຊິ້ນສ່ວນໃດໜຶ່ງ ເພື່ອສະໜອງ ຫຼື ປະກອບເຂົ້າໃນສາຍໃຍການປະກອບຍານພາຫະນະ ແລະ ຊິ້ນສ່ວນເປັນຊຸດເພື່ອປະກອບເຂົ້າໃນສາຍໃຍການປະກອບຍານພາຫະນະ. ບາງກໍລະນີ ຈະມີການດັດປັບຈໍານວນລາຍການຂອງຊິ້ນສ່ວນ ທີ່ໄດ້ກໍານົດໄວ້ໃນເອກະສານຊ້ອນທ້າຍ 3 ແລະ 4 ເພື່ອມາປະກອບໃນໂຮງງານ ໂດຍອີງຕາມແຕ່ລະປະເພດ ແລະ ເຕັກໂນໂລຊີຂອງຍານພາຫະນະ ຕາມແຕ່ລະໄລຍະ.

### ມາດຕາ 10 ລາຍການຊິ້ນສ່ວນ ທີ່ແຕກຕ່າງຈາກການກໍານົດສໍາລັບຍານພາຫະນະ 4 ລໍ້ຂື້ນໄປ

ລາຍການຊິ້ນສ່ວນ ທີ່ຂໍອະນຸຍາດນໍາເຂົ້າ ຫຼື ຜະລິດຢູ່ໃນໂຮງງານ ທີ່ມີຮູບແບບ ແລະ ລາຍການທີ່ແຕກຕ່າງຈາກທີ່ໄດ້ກໍານົດໄວ້ໃນຂໍ້ຕົກລົງສະບັບນີ້, ໂຮງງານຕ້ອງສະເໜີຕໍ່ຂະແໜງອຸດສາຫະກາ ແລະ ການຄ້າ ພິຈາລະນາຄືນຄ້ອາເພີ່ມເຕີມຕາມແຕ່ລະກໍລະນີ.

## ພາກທີ III
## ມາດຕະຖານ ແລະ ຄຸນນະພາບ ຂອງຊິ້ນສ່ວນຍານພາຫະນະ
## ແລະ ການກວດກາຄຸນນະພາບລົດພາຍຫຼັງການປະກອບ
### ໝວດທີ 1
### ມາດຕະຖານ ແລະ ຄຸນນະພາບ ຂອງຊິ້ນສ່ວນຍານພາຫະນະ

**ມາດຕາ 11 ມາດຕະຖານ ຊິ້ນສ່ວນຍານພາຫະນະ**

ມາດຕະຖານຊິ້ນສ່ວນຍານພາຫະນະ ລວມມີຍານພາຫະນະ 2 ລໍ້ ແລະ 4 ລໍ້ຂຶ້ນໄປ ແມ່ນເງື່ອນໄຂກໍານົດດ້ານຄຸນລັກສະນະສະເພາະຂອງຍານພາຫະນະ ທີ່ຜ່ານຂະບວນການຜະລິດ ແລະ ປະກອບ, ຈັດແບ່ງປະເພດ, ຂະໜາດ, ນໍ້າໜັກ ແລະ ກໍານົດຈຸດປະສົງຂອງການນໍາໃຊ້. ສໍາລັບມາດຕະຖານຂອງແຕ່ລະຊິ້ນສ່ວນຍານພາຫະນະ ຈະໄດ້ກໍານົດໄວ້ໃນລະບຽບການສະເພາະ.

**ມາດຕາ 12 ຄຸນນະພາບ ຊິ້ນສ່ວນຍານພາຫະນະ**

ຊິ້ນສ່ວນ ສໍາລັບມາປະກອບເປັນຍານພາຫະນະຢູ່ໃນໂຮງງານ ຕ້ອງໄດ້ຮັບການກວດກາຄຸນນະພາບ ແລະ ຢັ້ງຢືນຈາກພາກສ່ວນທີ່ກ່ຽວຂ້ອງ ຢູ່ພາຍໃນ ຫລື ຕ່າງປະເທດ. ໃນກໍລະນີ ຊິ້ນສ່ວນຍານພາຫະນະທີ່ມີຜົນຕໍ່ຄວາມປອດໄພ ຫຼື ລະບົບປະສິດທິພາບຂອງຍານພາຫະນະ ຕ້ອງໄດ້ຮັບການກວດກາ, ກວດສອບດ້ານຄຸນນະພາບ ຈາກຫ້ອງທົດລອງ ແລະ ໄດ້ຮັບໃບຢັ້ງຢືນຄຸນນະພາບຂອງຜະລິດຕະພັນ ຈາກອົງການທີ່ສາກົນຮັບຮອງ ຢູ່ພາຍໃນ ຫລື ຕ່າງປະເທດ.

### ໝວດທີ 2
### ການກວດກາຄຸນນະພາບ ແລະ ການອະນຸຍາດໃຊ້ຍານພາຫະນະ ພາຍຫຼັງການປະກອບໃນໂຮງງານ

**ມາດຕາ 13. ລະບົບກວດກາຄຸນນະພາບ ສໍາລັບຍານພາຫະນະ**

ໂຮງງານ ຜະລິດ ແລະ ປະກອບຍານພາຫະນະ ຕ້ອງມີລະບົບທົດລອງ-ທົດສອບຄຸນນະພາບຍານພາຫະນະເປັນຂອງຕົນເອງ ຫຼື ສູນທົດສອບ-ທົດລອງໃດໜຶ່ງ ແລະ ລະບົບກວດກາຄຸນນະພາບຕ້ອງໄດ້ຮັບການດູແລບົວລະບັດຮັກສາໃຫ້ຄົງຢູ່ສະພາບທີ່ໃຊ້ງານໄດ້ປົກກະຕິ. ລະບົບກວດກາຄຸນນະພາບຕ້ອງໄດ້ຮັບການກວດສອບ-ສອບທຽບ ຫຼື ປັບປຸງ ຫລື ປ່ຽນຖ່າຍໃຫ້ສາມາດໃຊ້ເປັນປົກກະຕິ ເມື່ອເຫັນວ່າ ເຄື່ອງກວດກາຄຸນນະພາບບໍ່ສາມາດໃຊ້ຢ່າງເປັນປົກກະຕິໄດ້.

1) **ສໍາລັບຍານພາຫະນະ 2 ລໍ້ ຕ້ອງປະກອບມີ:**
   - ເຄື່ອງຕັ້ງສູນລໍ້, ຖ່ວງລໍ້
   - ເຄື່ອງກວດສອບລະບົບຫ້າມລໍ້
   - ເຄື່ອງກວດສອບລະບົບຄວາມໄວ, ລະບົບບັນຊາ
   - ເຄື່ອງກວດກາລະບົບໄຟ, ແສງສະຫວ່າງ
2) **ສໍາລັບຍານພາຫະນະ 4 ລໍ້ຂຶ້ນໄປ ຕ້ອງປະກອບມີ:**
   - ເຄື່ອງຕັ້ງສູນລໍ້, ຖ່ວງລໍ້
   - ເຄື່ອງກວດສອບລະບົບຫ້າມລໍ້
   - ເຄື່ອງກວດສອບລະບົບຄວາມໄວ, ລະບົບບັນຊາ
   - ເຄື່ອງກວດກາລະບົບໄຟ, ແສງສະຫວ່າງ

- ເຄື່ອງກວດກາສະພາບຂອງໜ່ວຍຈັກ ແລະ ເຄື່ອງສົ່ງກຳລັງ

**ມາດຕາ 14. ການອະນຸຍາດນຳໃຊ້ຍານພາຫະນະ**

ກ່ອນນຳເອົາຍານພາຫະນະໄປຈຳໜ່າຍ ຫຼື ນຳໄປຂຶ້ນທະບຽນນຳໃຊ້ຕ້ອງໄດ້ຜ່ານການທົດສອບ-ທົດລອງ ໂດຍຜ່ານລະບົບກວດກາຄຸນນະພາບຕາມທີ່ໄດ້ກຳນົດໃນມາດຕາ 13 ຂອງຂໍ້ຕົກລົງສະບັບນີ້.

ເມື່ອຜົນການທົດສອບ-ທົດລອງ ສະແດງຜົນໃຫ້ເຫັນວ່າມີຄວາມຮັບປະກັນຄຸນນະພາບ, ໄດ້ມາດຕະຖານ, ທັງຮັບປະກັນເຕັກນິກຄວາມປອດໄພ ຈຶ່ງສາມາດນຳອອກຈຳໜ່າຍ ຫຼື ນຳໄປຂຶ້ນທະບຽນຕາມລະບຽບຫຼັກການຄຸ້ມຄອງຍານພາຫະນະທີ່ຂະແໜງການໂຍທາທິການ ແລະ ຂົນສົ່ງກຳນົດ.

## ພາກທີ IV
## ການຄຸ້ມຄອງການນຳເຂົ້າຊິ້ນສ່ວນ ແລະ ການຢັ້ງຢືນການຜະລິດ ແລະ ປະກອບຢູ່ພາຍໃນໂຮງງານ
### ໝວດທີ I
### ການຄຸ້ມຄອງການນຳເຂົ້າຊິ້ນສ່ວນ

**ມາດຕາ 15 ລິຂະສິດ**

ໂຮງງານປະກອບ-ຜະລິດຍານພາຫະນະ ຕ້ອງມີໃບມອບລິຂະສິດຈາກບໍລິສັດແມ່ຜູ້ເປັນເຈົ້າຂອງລິຂະສິດຢູ່ຕ່າງປະເທດ, ຊຶ່ງເປັນເຈົ້າຂອງສິດທິບັດທີ່ອະນຸຍາດໃຫ້ປະກອບ ຫຼື ຜະລິດຊິ້ນສ່ວນ ພ້ອມທັງໃບອະນຸຍາດໃຫ້ນຳໃຊ້ເຄື່ອງຫມາຍການຄ້າ ຫຼື ເຄື່ອງຫມາຍຜະລິດຕະພັນ ຈຶ່ງສາມາດດຳເນີນກິດຈະການໂຮງງານໄດ້ຢ່າງຖືກຕ້ອງຕາມລະບຽບກົດຫມາຍຂອງ ສປປ ລາວ.

ເຄື່ອງຫມາຍການຄ້າທີ່ໂຮງງານປະກອບ-ຜະລິດຍານພາຫະນະນຳໃຊ້ຕ້ອງໄດ້ຮັບການຈົດທະບຽນເຄື່ອງຫມາຍການຄ້າຕາມທີ່ໄດ້ກຳນົດໃນກົດຫມາຍວ່າດ້ວຍຊັບສິນທາງປັນຍາ. ໃນກໍລະນີ ບໍລິສັດ ຫລື ໂຮງງານ ມີເຄື່ອງໝາຍການຄ້າ ຫລື ສ້າງລິຂະສິດເປັນຂອງຕົນເອງ ຕ້ອງປະຕິບັດຕາມທີ່ໄດ້ກຳນົດໃນກົດຫມາຍວ່າດ້ວຍຊັບສິນທາງປັນຍາ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

**ມາດຕາ 16 ເງື່ອນໄຂການຂໍນຳເຂົ້າຊິ້ນສ່ວນ ເພື່ອມາຜະລິດ ຫຼື ປະກອບໃນໂຮງງານ**

ເງື່ອນໄຂການຂໍນາເຂົ້າຊິ້ນສ່ວນ ເພື່ອມາຜະລິດ ຫຼື ປະກອບໃນໂຮງງານ ມີດັ່ງນີ້:

1) ໄດ້ຮັບໃບມອບລິຂະສິດຈາກບໍລິສັດແມ່ຜູ້ເປັນເຈົ້າຂອງລິຂະສິດຢູ່ຕ່າງປະເທດ ຫລື ມີເຄື່ອງໝາຍການຄ້າ ຫລື ສ້າງລິຂະສິດ ໃນກໍລະນີທີ່ເປັນຂອງຕົນເອງ;
2) ໄດ້ຮັບໃບອະນຸຍາດຕ່າງໆ ທີ່ກ່ຽວຂ້ອງ;
3) ໄດ້ຮັບການຢັ້ງຢືນ ແລະ ຮັບຮອງແຜນການເຄື່ອນໄຫວປະຈຳປີຂອງໂຮງງານ ຈາກຂະແໜງ ອຸດສາຫະກຳ ແລະ ການຄ້າ;
4) ມີອາຄານໂຮງງານ, ເຄື່ອງຈັກ ແລະ ຂະບວນການສາຍໄຍ ສຳລັບຜະລິດ ຫລື ແລະ ປະກອບ ຍານພາຫະນະ.

**ມາດຕາ 17 ເອກະສານສະເໜີຂໍນຳເຂົ້າຊິ້ນສ່ວນ**

ເອກະສານ ສຳລັບສະເໜີຂໍຢັ້ງຢືນການນຳເຂົ້າຊິ້ນສ່ວນແຕ່ລະຄັ້ງ ມີດັ່ງນີ້:

1) ໃບສະເໜີຂໍນຳເຂົ້າຊິ້ນສ່ວນ ເພື່ອມາຜະລິດ ຫລື ແລະ ປະກອບໃນໂຮງງານ ເຖິງ ກົມອຸດສາຫະກຳ ແລະ ຫັດຖະກຳ, ກະຊວງ ອຸດສາຫະກຳ ແລະ ການຄ້າ;

2) ສຳເນົາໃບທະບຽນວິສາຫະກິດ, ສຳເນົາໃບຢັ້ງຢືນດຳເນີນກິດຈະການໂຮງງານ, ສຳເນົາໃບທະບຽນພາສີ-ອາກອນ ແລະ ສຳເນົາໃບຢັ້ງຢືນການຜະລິດ ແລະ ປະກອບຊິ້ນສ່ວນ;

3) ສຳເນົາໃບມອບສິດຜູ້ມາແລ່ນເອກະສານ;

4) ສຳເນົາໃບສະເໜີລາຄາ (Invoice)

5) ສຳເນົາໃບສັ່ງຊື້ (Purchase)

**ມາດຕາ 18 ການອອກໃບຢັ້ງຢືນການນຳເຂົ້າຊິ້ນສ່ວນ**

ການຄົ້ນຄວ້າພິຈາລະນາ ແລະ ອອກໃບຢືນການນຳເຂົ້າຊິ້ນສ່ວນ ຕ້ອງສຳເລັດພາຍໃນ 2 ວັນລັດຖະການ ພາຍຫຼັງທີ່ກົມ ອຸດສາຫະກຳ ແລະ ຫັດຖະກຳ, ກະຊວງ ອຸດສາຫະກຳ ແລະ ການຄ້າ ໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງແລ້ວ ຕາມທີ່ ລະບຸໄວ້ໃນມາດຕາ......ຂອງຂໍ້ຕົກລົງສະບັບນີ້. ໃບຢັ້ງຢືນການນຳເຂົ້າຊິ້ນສ່ວນ ເພື່ອມາຜະລິດ ແລະ ປະກອບຍານພາຫະນະ ມີອາຍຸນຳໃຊ້ 30 ວັນ (ສາມສິບວັນ) ນັບແຕ່ມື້ເຊັນໃບຢັ້ງຢືນການນຳເຂົ້າ ເປັນຕົ້ນໄປ.

## ໝວດທີ II
## ການຢັ້ງຢືນການຜະລິດຊິ້ນສ່ວນ ແລະ ປະກອບ ຍານພາຫະນະຢູ່ໂຮງງານ

**ມາດຕາ 19 ໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ ປະກອບຍານພາຫະນະໃນໂຮງງານ**

ໃບຢັ້ງຢືນ ການຜະລິດຊິ້ນສ່ວນ ແລະ ການປະກອບຍານພາຫະນະໃນໂຮງງານ ແມ່ນເອກະສານຢັ້ງຢືນຂະບວນ ການຜະລິດ ຫລື ການປະກອບພາຍໃນໂຮງງານ ໂດຍການກຳນົດລາຍການຊິ້ນສ່ວນທີ່ ສາມາດຜະລິດ ຫຼື ແລະ ລາຍການຊິ້ນ ສ່ວນທີ່ນຳມາປະກອບໃນໂຮງງານ. ໃບຢັ້ງຢືນນີ້ ແມ່ນເພື່ອເປັນເອກະສານອ້າງອີງ ໃນການຄົ້ນຄວ້າພິຈາລະນາ ການເສຍພາສີ-ອາກອນ ແນ່ໃສ່ເພື່ອຊຸກຍູ້ສົ່ງເສີມອຸດສາຫະກຳຍານພາຫະນະ ຕາມທີ່ກຳນົດໄວ້ໃນມາດຕາ 43 ຂອງກົດໝາຍ ວ່າດ້ວຍ ອຸດສາຫະກຳປຸງແຕ່ງ.

**ມາດຕາ 20 ເງື່ອນໄຂການອອກໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ ປະກອບຍານພາຫະນະໃນໂຮງງານ**

ບຸກຄົນ ແລະ ນິຕິບຸກຄົນ ທີ່ດຳເນີນກິດຈະການ ການຜະລິດ ແລະ/ຫຼື ປະກອບຍານພາຫະນະ ຢູ່ ສປປລາວ ຕ້ອງສະເໜີຕໍ່ຂະແໜງອຸດສາຫະກຳ ແລະການຄ້າ ເພື່ອອອກໃບຢັ້ງຢືນໂດຍສອດຄ່ອງຕາມເງື່ອນໄຂ ດັ່ງນີ້:

1. ມີໃບຢັ້ງຢືນດາເນີນກິດຈະການໂຮງງານ ທີ່ຍັງບໍ່ທັນໝົດອາຍຸ ແລະ ເອກະສານອື່ນໆ ທີ່ກ່ຽວຂ້ອງ;
2. ມີເຄື່ອງຈັກ-ອຸປະກອນ ແລະ ຂະບວນການ ເພື່ອຜະລິດຊິ້ນສ່ວນ ຫຼື ແລະ ປະກອບຍານພາຫະນະ ທີ່ຖືກຕ້ອງ ແລະ ແທດເໝາະ ຕາມມາດຕະຖານເຕັກນິກຂອງການຜະລິດ ແລະ ການປະກອບຊິ້ນສ່ວນຍານພາຫະນະ.

**ມາດຕາ 21 ການປະກອບເອກະສານສະເໜີອອກໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ ປະກອບຍານພາຫະນະ**

ການສະເໜີອອກໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ /ຫຼື ປະກອບຍານພາຫະນະ ໃຫ້ປະກອບ ເອກະສານດັ່ງນີ້:

1. ໃບສະເໜີຕາມແບບພິມທີ່ຂະແໜງອຸດສາຫະກາ ແລະ ການຄ້າໄດ້ການົດ;
2. ໃບຢັ້ງຢືນດາເນີນກິດຈະການໂຮງງານ;
3. ມີລາຍການບັນຊີຊິ້ນສ່ວນພາຫະນະທີ່ ຈະຜະລິດ ແລະ/ຫຼື ຈະນຳມາປະກອບຢູ່ໂຮງງານ
4. ໃບຮັບຮອງຊັບສິນທາງປັນຍາ ຫຼື ໃບມອບສິດຈາກບໍລິສັດແມ່.

**ມາດຕາ 22 ຂັ້ນຕອນການອອກໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ ປະກອບຍານພາຫະນະໃນໂຮງງານ**

ພາຍຫຼັງໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງຕາມທີ່ກໍານົດໄວ້ໃນມາດຕາ 14 ຂອງຂໍ້ຕົກລົງສະບັບນີ້ ເຈົ້!ໜ້າທີ່ ຂອງຂະແໜງ ອຸດສາຫະກໍາ ແລະ ການຄ້າ ຕ້ອງລົງກວດກາ, ເຮັດບົດບັນທຶກ ພາຍໃນ 10 ວັນລັດຖະການ ໂດຍມີການ ສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ;

ຖ້າເຫັນວ່າຄໍາຮ້ອງ ແລະ ເອກະສານປະກອບຫາກມີເນື້ອໃນບໍ່ຖືກຕ້ອງແລະບໍ່ຄົບຖ້ວນ ຕ້ອງແຈ້ງເປັນລາຍລັກ ອັກສອນໃຫ້ຜູ້ຮ້ອງຂໍ ພາຍໃນ 3 ວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານເພື່ອໃຫ້ຜູ້ຮ້ອງຂໍແກ້ໄຂໃຫ້ຖືກຕ້ອງ ແລະ ຄົບ ຖ້ວນ;

ໃນກໍລະນີບໍ່ສາມາດອອກບໍ່ໃບຢັ້ງຢືນໄດ້ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນໃຫ້ຜູ້ຮ້ອງຂໍພາຍໃນ 3 ວັນ ລັດຖະການນັບແຕ່ໄດ້ຮັບເອກະສານເປັນຕົ້ນໄປ;

ຖ້າເຫັນວ່າເອກະສານຄົບຖ້ວນ, ຖືກຕ້ອງ ແລະ ໄດ້ຜ່ານການກວດກາ ເຫັນດີແລ້ວ ກະຊວງອຸດສາຫະກໍາ ແລະ ການຄ້າ ຕ້ອງອອກໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ ປະກອບຍານພາຫະນະຂອງໂຮງງານ ສໍາເລັດພາຍໃນ 5 ວັນລັດຖະ ການ ນັບແຕ່ໄດ້ຮັບເອກະສານເປັນຕົ້ນໄປ.

**ມາດຕາ 23 ອາຍຸ ແລະ ການຕໍ່ອາຍຸຂອງໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ ປະກອບຍານພາຫະນະ**

ໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ ປະກອບຍານພາຫະນະໃນໂຮງງານ ມີອາຍຸ 01 ປີ ແລະ ສາມາດຕໍ່ໄດ້. ກ່ອນ ໃບຢັ້ງຢືນຈະໝົດອາຍຸ 30 ວັນ ເຈົ້າຂອງໂຮງງານ ຫລື ບໍລິສັດ ໃຫ້ສະເໜີມາຍັງ ກະຊວງອຸດສາຫະກໍາ ແລະ ການຄ້າ (ກົມ ອຸດສາຫະກໍາ ແລະ ຫັດຖະກໍາ), ປະກອບເອກະສານຕ່າງໆ ທີ່ກ່ຽວຂ້ອງ ແລະ ປະຕິບັດຕາມຂັ້ນຕອນການອອກໃບຢັ້ງຢືນ ການຜະລິດຊິ້ນສ່ວນ ແລະ ປະກອບຍານພາຫະນະ ຕາມທີ່ກໍານົດໄວ້ໃນມາດຕາ 14 ແລະ 15 ຂອງຂໍ້ຕົກລົງ ສະບັບນີ້.

ໃນກໍລະນີ ມີການປ່ຽນແປງຂະບວນການຜະລິດ ແລະ ປະກອບພາຫະນະ, ເພີ່ມ ຫຼື ຫຼຸດ ຈໍານວນລາຍການຊິ້ນ ສ່ວນ ທີ່ຜະລິດ ຫລື ປະກອບຢູ່ໂຮງງານ ເຈົ້າຂອງໂຮງງານ, ບໍລິສັດ ຕ້ອງເຮັດໜັງສືສະເໜີມາຍັງ ກົມອຸດສາຫະກໍາ ແລະ ຫັດຖະກໍາ ເພື່ອຄົ້ນຄວ້າພິຈາລະນາດັດແກ້ໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ ປະກອບຍານພາຫະນະ. ການຈັດຕັ້ງ ປະຕິບັດ ໃຫ້ປະຕິບັດຄືກັນກັບການຂໍໃບຢັ້ງຢືນ ຕາມທີ່ກໍານົດໄວ້ໃນມາດຕາ 14 ແລະ 15 ຂອງຂໍ້ຕົກລົງສະບັບນີ້ດ.

**ມາດຕາ 24 ການປ່ຽນແປງລາຍການ ການຜະລິດ ແລະ ຊິ້ນສ່ວນປະກອບ**

ການປ່ຽນແປງລາຍການ ການຜະລິດ ແລະ ຊິ້ນສ່ວນປະກອບພາຫະນະ ແມ່ນ ໃຫ້ເຈົ້າຂອງໂຮງງານ,ບໍລິສັດ ເຮັດ ໜັງສືສະເໜີມາຍັງ ກົມອຸດສາຫະກໍາ ແລະ ຫັດຖະກໍາ ເພື່ອຄົ້ນຄວ້າພິຈາລະນາດັດແກ້ ໃບຢັ້ງຢືນລາຍການຜະລິດຊິ້ນສ່ວນ ແລະ ປະກອບຍານພາຫະນະ.

## ພາກທີ V
## ການກວດກາການນຳເຂົ້າຊິ້ນສ່ວນ ເພື່ອມາຜະລິດ ແລະ ປະກອບຢູ່ໂຮງງານ

### ມາດຕາ 25 ການກວດກາການນຳເຂົ້າຊິ້ນສ່ວນ

ການກວດກາການນຳເຂົ້າຊິ້ນສ່ວນ ແມ່ນການກວດກາສະພາບເຕັກນິກຂອງຊິ້ນສ່ວນ ແນ່ໃສ່ເພື່ອຮັບປະກັນທາງດ້ານເຕັກນິກ ເປັນຕົ້ນ: ມາດຕະຖານ, ຄຸນນະພາບ ຂອງຜະລິດຕະພັນຊິ້ນສ່ວນ ໂດຍຖືກຕ້ອງ ແລະ ສອດຄ່ອງຕາມຮູບແບບຂອງການນຳເຂົ້າ ເພື່ອມາຜະລິດ ແລະ ປະກອບຢູ່ໃນໂຮງງານ ລວມທັງການປະຕິບັດສິດ ແລະ ພັນທະຂອງຜູ້ດຳເນີນກິດຈະການໂຮງງານ ຕາມມາດຕາ 67 ຂອງກົດໝາຍວ່າດ້ວຍອຸດສາຫະກາປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013.

### ມາດຕາ 26 ຮູບການກວດກາການນຳເຂົ້າຊິ້ນສ່ວນ

ການກວດກາການນຳເຂົ້າຊິ້ນສ່ວນ ໄດ້ກຳນົດເປັນສາມຮູບການ ດັ່ງນີ້:

1. ການກວດກາ ຕາມລະບົບປົກກະຕິ;
2. ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາ ແບບກະທັນຫັນ.

### ມາດຕາ 27 ການກວດກາ ຕາມລະບົບປົກກະຕິ

ການກວດກາຕາມລະບົບປົກກະຕິ ແມ່ນການກວດກາຕາມການນຳເຂົ້າຊິ້ນສ່ວນ ມາຜະລິດ ແລະ ປະກອບພາຍໃນໂຮງງານ ຕາມການນຳເຂົ້າຕົວຈິງ ໂດຍກວດກາຕາມຂັ້ນຕອນ ແລະ ມີກຳນົດເວລາອັນແນ່ນອນ ຊຶ່ງປະກອບດ້ວຍການກວດກາດ້ານເອກະສານ, ການປະຕິບັດພັນທະພາສີ-ອາກອນ ແລະ ການກວດກາຂອງຈຳນວນຕາມຮູບແບບທີ່ໄດ້ຮັບອະນຸຍາດ.

### ມາດຕາ 28 ການກວດກາຊິ້ນສ່ວນໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ

ການກວດກາຊິ້ນສ່ວນໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນ, ກ່ອນລົງກວດກາແຕ່ລະຄັ້ງ ຕ້ອງແຈ້ງໃຫ້ເປົ້າໝາຍທີ່ຈະລົງກວດກາຮັບຊາບກ່ອນລ່ວງໜ້າ ຢ່າງໜ້ອຍ 1 ວັນ. ການກວດການອກແຜນ ແມ່ນການກວດກາກໍລະນີທີ່ເຫັນວ່າມີຄວາມຈຳເປັນ ຫຼື ຕາມຄຳສັ່ງ ທີ່ຕ້ອງໄດ້ລົງກວດກາ ເຊັ່ນ: ການນຳເຂົ້າຊິ້ນສ່ວນ ທີ່ບໍ່ຖືກຕ້ອງຕາມຮູບແບບຂອງການຜະລິດ ຫລື ປະກອບ, ບໍ່ໄດ້ຮັບການຢັ້ງຢືນ ແລະ ອະນຸຍາດ ຈາກຂະແໜງການອຸດສາຫະກຳ ແລະ ການຄ້າ.

### ມາດຕາ 29 ການກວດກາແບບກະທັນຫັນ

ການກວດກາແບບກະທັນຫັນ ແມ່ນການກວດກາ ໃນເວລາທີ່ເຫັນວ່າມີຄວາມຈຳເປັນ ແລະ ຮີບດ່ວນ ເປັນຕົ້ນ ໃນກໍລະນີມີຄຳສັ່ງຊີ້ນຳຂອງຂັ້ນເທິງ, ຕາມແຫຼ່ງຂ່າວ, ຕາມການສະເໜີ, ຕາມການຮ້ອງຟ້ອງຂອງບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບມາດຕະຖານ, ຄວາມປອດໄພ, ຄຸນນະພາບ, ລິຂະສິດ, ຊັບສິນທາງປັນຍາ ຫຼື ສິ່ງໄສ່ວ່າອາດກໍ່ໃຫ້ເກີດບັນຫາຕໍ່ທີ່ເປັນຜົນກະທົບຕໍ່ເສດຖະກິດ ແລະ ສັງຄົມ. ການກວດກາແບບກະທັນຫັນນີ້ ແມ່ນລົງກວດກາໄດ້ທຸກເວລາ ໂດຍທີ່ບໍ່ໄດ້ແຈ້ງໃຫ້ຜູ້ດຳເນີນກິດຈະການໂຮງງານຊາບ.

**ມາດຕາ 30 ຜູ້ລົງກວດກາໂຮງງານ**

ຜູ້ທີ່ມີສິດລົງກວດກາການນຳເຂົ້າຊິ້ນສ່ວນຢູ່ໂຮງງານ ແມ່ນເຈົ້າໜ້າທີ່ກວດກາໂຮງງານຂອງຂະແໜງການອຸດສາຫະກຳ ແລະ ການຄ້າ ທີ່ຖືກແຕ່ງຕັ້ງໃຫ້ເປັນເຈົ້າໜ້າທີ່ຜູ້ທີ່ມີຄວາມຮັບຜິດຊອບວຽກງານມາດຕະຖານຜະລິດຕະພັນ ຂອງຂະແໜງອຸດສາຫະກຳ ແລະ ຫັດຖະກຳ.

## ພາກທີ VI
## ຂໍ້ຫ້າມ

**ມາດຕາ 31 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳດັ່ງນີ້:

1. ອອກ ຫຼື ໂຈະ ຫຼື ຖອນ ໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ ປະກອບຍານພາຫະນະໃນໂຮງງານ ທີ່ບໍ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນ;

2. ສ້າງອຸປະສັກ, ສົ່ງກີດຂວາງ ຫຼື ຂັດຂວາງໃນທຸກຮູບແບບ ເກີນຂອບເຂດສິດ ແລະ ໜ້າທີ່ ຕໍ່ກັບການ ນຳເຂົ້າຊິ້ນສ່ວນພາຫະນະ ເພື່ອມາຜະລິດ ປລະ ປະກອບຢູ່ໂຮງງານ;

3. ອະນຸຍາດທຸກຮູບແບບ ໃຫ້ໂຮງງານເຄື່ອນໄຫວການນຳເຂົ້າຊິ້ນສ່ວນ ທີ່ບໍ່ມີໃບຢັ້ງຢືນດຳເນີນກິດຈະການໂຮງງານ, ໃບຢັ້ງຢືນການນຳເຂົ້າຊິ້ນສ່ວນ, ໃບຢັ້ງຢືນການຜະລິດ ແລະ ປະກອບຊິ້ນສ່ວນ ຫຼື ບໍ່ລາຍງານ ກ່ຽວກັບການເຄື່ອນໄຫວຜະລິດ ແລະ ປະກອບຊິ້ນສ່ວນ ທີ່ຜິດກົດໝາຍ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

**ມາດຕາ 32 ຂໍ້ຫ້າມສຳລັບຜູ້ດຳເນີນກິດຈະການໂຮງງານ**

ຫ້າມຜູ້ດຳເນີນກິດຈະການໂຮງງານ ມີພຶດຕິກຳດັ່ງນີ້:

1) ນຳເອົາຊິ້ນສ່ວນທີ່ໄດ້ຮັບອະນຸຍາດໄປເຄື່ອນໄຫວກິດຈະການ ໃນທາງທີ່ບໍ່ຖືກຕ້ອງຕາມຈຸດປະສົງຂອງການອະນຸຍາດ ເປັນຕົ້ນ: ນຳເຂົ້າຊິ້ນສ່ວນ-ອາໄຫຼ່ຍານພາຫະນະ ໄປຈຳໜ່າຍໃນຮູບແບບຊິ້ນສ່ວນ-ອາໄຫຼ່ ຕາມທ້ອງຕະຫຼາດ ແລະ ທີ່ຜິດຕໍ່ລະບຽບກົດໝາຍ;

2) ປອມແປງເອກະສານ, ປົດບັງຂໍ້ມູນຄວາມຈິງ, ຂັດຂວາງ ຫຼື ບໍ່ໃຫ້ຄວາມຮ່ວມມືແກ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

3) ນຳເຂົ້າຊິ້ນສ່ວນທີ່ບໍ່ຖືກຕ້ອງ ແລະ ສອດຄ່ອງ ຕາມທີ່ກຳນົດໄວ້ໃນໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ ປະກອບຍານພາຫະນະ;

4) ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

**ມາດຕາ 33 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ແລະ ພະນັກງານ**

ຫ້າມເຈົ້າໜ້າທີ່ ແລະ ພະນັກງານ ຂະແໜງການອຸດສາຫະກຳ ແລະ ການຄ້າ ມີພຶດຕິກຳດັ່ງນີ້:

1) ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ, ສົມຮູ້ຮ່ວມຄິດ ຫຼື ມີວິທີການອື່ນທຸກຮູບແບບ ທີ່ຂັດຕໍ່ຂໍ້ຕົກລົງສະບັບນີ້ ຫຼື ລະບຽບການອື່ນໆທີ່ກ່ຽວຂ້ອງ ຢ່າງເດັດຂາດ;

2) ຮັບສິນບົນ;

3) ເມີນເສີຍຕໍ່ການລາຍງານ ກ່ຽວກັບໂຮງງານ ທີ່ເຄື່ອນໄຫວບໍ່ຖືກຕ້ອງຕາມລະບຽບກົດໝາຍ;
4) ເປີດເຜີຍເອກະສານລັບຂອງຊາດ, ຂອງລັດຖະການ ແລະ ຜູ້ປະກອບການໂຮງງານ;
5) ກົດໜ່ວງ, ຖ່ວງດຶງ ເອກະສານ ຫຼື ປອມແປງລາຍເຊັນຜູ້ມີອຳນາດ;
6) ມີພຶດຕິກຳອື່ນ ທີ່ເປັນການລະເມີດ ລະບຽບກົດໝາຍ.

## ພາກທີ VII
## ສິດ ແລະ ໜ້າທີ່

### ມາດຕາ 34 ສິດ ແລະ ໜ້າທີ່ຂອງກະຊວງ ອຸດສາຫະກຳ ແລະ ການຄ້າ

ກະຊວງ ອຸດສາຫະກຳ ແລະ ການຄ້າ (ກົມອຸດສາຫະກຳ ແລະ ຫັດຖະກຳ) ມີສິດ ແລະ ໜ້າທີ່ ດັ່ງນີ້:

1) ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃນຂອບເຂດທົ່ວປະເທດ;
2) ອອກໃບຢັ້ງຢືນ ການຜະລິດຊິ້ນສ່ວນ ແລະ ປະກອບຍານພາຫະນະ;
3) ອອກໃບຢັ້ງຢືນ ການນຳເຂົ້າຊິ້ນສ່ວນ ເພື່ອມາຜະລິດ ແລະ ປະກອບຢູ່ໂຮງງານ;
4) ກວດກາການນຳເຂົ້າຊິ້ນສ່ວນ ເພື່ອມາຜະລິດ ແລະ ປະກອບຢູ່ພາຍໃນໂຮງງານ;
5) ປະສານສົມທົບກັບພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ ແລະ ຂະແໜງການກ່ຽວຂ້ອງ ເພື່ອກວດສອບລະບົບການປະກອບ-ຜະລິດ, ລະບົບກວດກາຄຸນນະພາບ ແລະ ກິດຈະກຳອື່ນໆ ທີ່ກ່ຽວຂ້ອງໃນຂອບເຂດທົ່ວປະເທດ ຕາມແຕ່ລະໄລຍະ.

### ມາດຕາ 35 ສິດ ແລະ ໜ້າທີ່ຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ

ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ ມີໜ້າທີ່ດັ່ງນີ້:

1) ຢັ້ງຢືນແຜນການເຄື່ອນໄຫວປະຈຳປີຂອງໂຮງງານ ແລະ ລາຍງານຕໍ່ກົມອຸດສາຫະກຳ ແລະ ຫັດຖະກຳ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນແຕ່ລະງວດ ຕາມທີ່ລະບຸໄວ້ໃນແຈ້ງການເລກທີ 663/ ອຄ. ກອກ, ລົງວັນທີ 8 ຕຸລາ 2008 ຫຼື ຕາມແຕ່ລະກໍລະນີ;
2) ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດການນຳເຂົ້າຊິ້ນສ່ວນ ເພື່ອມາຜະລິດ ແລະ ປະກອບຢູ່ໂຮງງານ ທີ່ນອນຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
3) ຄຸ້ມຄອງ, ເອື້ອອຳນວຍຄວາມສະດວກ ແລະ ຊຸກຍູ້ໃຫ້ໂຮງງານປະກອບ-ຜະລິດຍານພາຫະນະໃຫ້ມີການເຄື່ອນໄຫວປົກກະຕິ ແລະ ຖືກຕ້ອງຕາມລະບຽບການທີ່ກ່ຽວຂ້ອງກຳນົດ ທຸກປະການ.

## ໝວດທີ VIII
## ການຍ້ອງຍໍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 36 ການຍ້ອງຍໍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະກອບສ່ວນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບກົດໝາຍ.

ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງໃດ ທີ່ມີຜົນງານໃນການຊອກເຫັນ ແລະ ລາຍງານ ການລະເມີດຂໍ້ຕົກລົງສະບັບນີ້ ແລະ ລະບຽບການຕ່າງໆ ກ່ຽວກັບຍານພາຫະນະໃຫ້ແກ່ຂະແໜງການອຸດສາຫະກຳ ແລະ ການຄ້າ ຈະໄດ້ຮັບການຍ້ອງຍໍ ຫຼື ບຳເນັດຕາມແຕ່ລະກໍລະນີ.

**ມາດຕາ 37 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບ ໃໝ, ໃຊ້ແທນຄ່າເສຍຫາຍ ຫຼື ລົງໂທດທາງອາຍາ ຕາມແຕ່ລະກໍລະນີ.

ຜູ້ທີ່ໄດ້ຮັບອະນຸຍາດດໍາເນີນກິດຈະການໂຮງງານປະກອບ-ຜະລິດຍານພາຫະນະຫາກລະເມີດ ຫຼື ບໍ່ປະຕິບັດຕາມຂໍ້ຕົກລົງສະບັບນີ້ ຫຼື ມີການປອມແປງໃບອະນຸຍາດນໍາເຂົ້າຊິ້ນສ່ວນ-ອາໄຫຼ່ ຈະຖືກກ່າວເຕືອນ, ສຶກສາອົບຮົມ, ໃຊ້ແທນຄ່າເສຍຫາຍ, ປັບ ໃໝ ແລະ ປະຕິບັດມາດຕະການທາງອາຍາຕາມແຕ່ລະກໍລະນີ.

ສໍາລັບເຈົ້າໜ້າທີ່ຂອງລັດ ທີ່ມີສ່ວນຮ່ວມໃນການຄຸ້ມຄອງ ແລະ ກວດກາຊິ້ນສ່ວນ-ອາໄຫຼ່ຍານພາຫະນະ ຫາກມີການປະພຶດທີ່ຂັດກັບຂໍ້ຫ້າມທີ່ໄດ້ກໍານົດຢູ່ໃນມາດຕາ 33 ຂອງຂໍ້ຕົກລົງສະບັບນີ້ຈະຕ້ອງໄດ້ຖືກປະຕິບັດມາດຕະການທາງວິໄນຕາມທີ່ມີການກໍານົດຢູ່ໃນໝວດທີ 14 ຂອງດໍາລັດເລກທີ 82/ນຍ, ລົງວັນທີ 10/05/2003 ວ່າດ້ວຍລະບຽບລັດຖະກອນແຫ່ງ ສປປ ລາວ ຢ່າງເຂັ້ມງວດ.

**ມາດຕາ 38 ມາດຕະການກ່າວເຕືອນ ແລະ ສຶກສາອົບຮົມ**

ຜູ້ດໍາເນີນກິດຈະການໂຮງງານ ທີ່ລະເມີດຕໍ່ຂໍ້ຕົກລົງສະບັບນີ້, ລະບຽບກົດໝາຍທີ່ກ່ຽວຂ້ອງ ເປັນຄັ້ງທີ່ໜຶ່ງ ຈະຖືກກ່າວເຕືອນ ຫຼື ສຶກສາອົບຮົມ ຈາກເຈົ້າໜ້າທີ່ຂະແໜງການອຸດສາຫະກໍາ ແລະ ການຄ້າ ໂດຍເຮັດບົດບັນທຶກກ່າວເຕືອນໄວ້ເປັນຫຼັກຖານ.

## ໝວດທີ IX
## ບົດບັນຍັດສຸດທ້າຍ

**ມາດຕາ 39 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມອຸດສາຫະກໍາ ແລະ ຫັດຖະກໍາ, ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງແລະຫ້ອງການອຸດສາຫະກໍາ ແລະ ການຄ້າເມືອງ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເຜີຍແຜ່, ແນະນໍາ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນໃຫ້ໄດ້ຮັບຜົນດີ ແລະ ເຂັ້ມງວດ ໂດຍສອດຄ່ອງກັບລະບຽບກົດໝາຍ ທີ່ກ່ຽວຂ້ອງ.

**ມາດຕາ 40 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງລົງລາຍເຊັນ ແລະ ພິມລົງໃນຈົດໝາຍເຫດທາງລັດຖະການ 15 ວັນ.

ຂໍ້ຂໍ້ຕົກລົງສະບັບນີ້ ໃຊ້ປ່ຽນແທນໃຊ້ປ່ຽນແທນແຈ້ງການ ສະບັບເລກທີ 062/ອຫ, ລົງວັນທີ 01/02/1999 ແລະ ແຈ້ງການສະບັບເລກທີ 152/ອຫ, ລົງວັນທີ 10/5/1999.

**ລັດຖະມົນຕີ**